ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງທະນາຄານທຸລະກິດ ເລກທີ A2 /ກຄທ

ນະຄອນຫຼວງວຽງຈັນ, ວັນທີ 26 ມັງກອນ 2023

# ແຈ້ງການ

**ເຖິງ:** ທ່ານ ຜູ້ອໍານວຍການທະນາຄານທຸລະກິດ ແລະ ຫົວໜ້າສາຂາທະນາຄານທຸລະກິດຕ່າງປະເທດ,

**ເລື່ອງ:** ໂຈະການສະໜອງສິນເຊື່ອ ທີ່ຕິດພັນກັບການຂຸດຄົ້ນເງິນຄຣິບໂຕ ຫຼື ຊັບສິນດິຈິຕອລ.

- ອີງຕາມກົດໝາຍ ວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 955/ທຫລ, ລົງວັນທີ 07 ພະຈິກ 2013.

ເພື່ອຫຼຸດຜ່ອນຄວາມສ່ຽງດ້ານສິນເຊື່ອ ແນໃສ່ຮັກສາຄວາມໝັ້ນຄົງຂອງທະນາຄານທຸລະກິດ ທັງເປັນການສົ່ງເສີມການສະໜອງສິນເຊື່ອໃຫ້ແກ່ຂະແໜງການຜະລິດຕົວຈິງ ທີ່ເປັນພື້ນຖານເສດຖະກິດຂອງ ສປປ ລາວ, ກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານແຫ່ງ ສປປ ລາວ ແຈ້ງໃຫ້ບັນດາທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທົ່ວລະບົບ ປະຕິບັດດັ່ງນີ້:

1. ໃຫ້ໂຈະການພິຈາລະນາອະນຸມັດສິນເຊື່ອ ເພື່ອຈຸດປະສົງໃນການຂຸດຄົ້ນ ແລະ ກິດຈະການກ່ຽວຂ້ອງກັບເງິນຄຣິບໂຕ ຫຼື ຊັບສິນດິຈິຕອລທີ່ຄ້າຍຄືກັນ ພ້ອມທັງໃຫ້ໂຈະສະໜອງສິນເຊື່ອດັ່ງກ່າວ ຕໍ່ທຸກກໍລະນີທີ່ຍັງບໍ່ທັນໄດ້ເຊັນສັນຍາເງິນກູ້ ກ່ອນວັນທີອອກແຈ້ງການສະບັບນີ້;
2. ສໍາລັບກໍລະນີທີ່ໄດ້ເຊັນສັນຍາເງິນກູ້ແລ້ວ ກ່ອນວັນທີຂອງແຈ້ງການສະບັບນີ້ມີຜົນສັກສິດ ແມ່ນໃຫ້ທົບທວນຄືນ ປະສິດທິຜົນຂອງສິນເຊື່ອດັ່ງກ່າວໃນແຕ່ລະເດືອນໂດຍລະອຽດ ພ້ອມທັງປະເມີນຄືນມູນຄ່າຫຼັກຊັບຄໍ້າປະກັນທີ່ກ່ຽວຂ້ອງ ໃຫ້ສອດຄ່ອງກັບມູນຄ່າຕະຫຼາດ ຕາມລະບຽບການວ່າດ້ວຍການປະເມີນຫຼັກຊັບຄໍ້າປະກັນ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ;
3. ໃຫ້ມີລະບຽບ ຫຼື ຄູ່ມືພາຍໃນທີ່ກໍານົດລະອຽດ ກ່ຽວກັບການຈັດຕັ້ງປະຕິບັດຂໍ້ 1 ຫາ 2 ຂ້າງເທິງ ແນໃສ່ຮັບປະກັນການປະຕິບັດເປັນເອກະພາບ, ສອດຄ່ອງ ແລະ ມີປະສິດທິຜົນ;
4. ໃຫ້ລາຍງານສິນເຊື່ອທີ່ໄດ້ຖືກອະນຸມັດ ແລະ ເຊັນສັນຍາເງິນກູ້ທັງໝົດ ໃນຂໍ້ 2 ຂ້າງເທິງ ຕາມແບບຟອມລາຍງານທີ່ຄັດຕິດມາພ້ອມນີ້ ມາຍັງ ກຄທ ພາຍໃນ ສິບວັນ ນັບແຕ່ວັນທີ ທີ່ແຈ້ງສະບັບນີ້ມີຜົນສັກສິດ ຜ່ານທາງອີເມວ: banksupervision_legal@bol.gov.la;

5. ໃນກໍລະນີລະເມີດແຈ້ງການສະບັບນີ້, ທະນາຄານທຸລະກິດ, ຜູ້ບໍລິຫານ ແລະ ພະນັກງານທີ່ກ່ຽວຂ້ອງ ຈະຖືກປະຕິບັດມາດຕະການ ຕາມລະບຽບກົດໝາຍ;
6. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

**ຫົວໜ້າກົມ**

ອາລຸນ ບຸນຍົງ

**ເອກະສານຄັດຕິດ:**
ກະລຸນາດາວໂຫຼດແບບພິມລາຍງານໄດ້ທີ່: *shorturl.at/agtxD*
**ໝາຍເຫດ:**
ລາຍລະອຽດເພີ່ມເຕີມ ຕິດຕໍ່:
ພະແນກນິຕິກຳ, ກົມຄຸ້ມຄອງທະນາຄານທຸລະກິດ ໂທລະສັບ: 021 254 291